ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ.ຫຼບ ປະເມີນຜົນການປະຕິບັດວຽກງານຂັ້ນ ຄະນະສາຂາ ປະຈຳປີ 2021




ໃນຕອນເຊົ້າຂອງວັນທີ 28 ກຸມພາ 2022 ທີ່ຫ້ອງປະຊຸມຊັ້ນ III ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອແຂວງຫຼວງພະບາງ (ທຫລ.ຫຼບ) ໄດ້ຈັດກອງປະຊຸມປະເມີນຜົນການປະຕິບັດວຽກງານຂັ້ນຄະນະສາຂາ ທຫລ.ຫຼບ ປະຈຳປີ 2021 ໂດຍການໃຫ້ກຽດເປັນປະທານກອງປະຊຸມຂອງທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການ ທຫລ, ຜູ້ຊີ້ນຳ ທຫລ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ມີຄະນະສາຂາ, ຄະນະພະແນກ ແລະ ຜູ້ທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຄຳວົງ ທິບພະວົງ ຮອງຜູ້ວ່າການ ທຫລ ໄດ້ໃຫ້ຮູ້ວ່າ: ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນຂອງ ທຫລ ນີ້ແມ່ນໄດ້ດຳເນີນເປັນປົກກະຕິປີລະຄັ້ງ ນັບແຕ່ປີ 2014 ເປັນຕົ້ນມາ ໂດຍອີງຕາມດຳລັດວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານລັດຖະກອນສະບັບເລກທີ 300/ລບ ລົງວັນທີ 13 ກັນຍາ 2017 ແລະ ຄຳແນະນຳການຈັດຕັ້ງປະຕິບັດດຳລັດ ສະບັບເລກທີ 06/ພນ ລົງວັນທີ 02 ພຶດສະພາ 2018. ສະນັ້ນ, ເພື່ອສືບຕໍ່ຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນປະຈຳປີ 2021 ຄະນະຮັບຜິດຊອບປະເມີນຜົນການປະຕິບັດວຽກງານຂອງ ທຫລ ໄດ້ອອກປຶດແນະນຳການຈັດຕັ້ງ

ປະຕິບັດການປະເມີນຜົນການປະຕິບັດວຽກງານຂອງພະນັກງານ ທຫລ ປະຈຳປີ 2021 ແລະ ອີງໃສ່ຄວາມຮັບຜິດຊອບໜ້າທີ່ວຽກງານຂອງຄະນະສາຂາ ທຫລ.ຫຼບ ໃນການຊີ້ນຳ-ນຳພາວຽກງານໃນໄລຍະ 1 ປີ ທີ່ຜ່ານມາ ຈຶ່ງໄດ້ຈັດກອງປະຊຸມນີ້ຂຶ້ນ ເພື່ອປະກອບຄວາມຄິດຄວາມເຫັນກໍຄືການຕີລາຄາຕໍ່ການປະເມີນດັ່ງກ່າວ. ທ່ານຮອງຜູ້ວ່າການ ທຫລ ຍັງໄດ້ເນັ້ນໜັກຕໍ່ການປະເມີນຜົນການປະຕິບັດວຽກງານຂອງຄະນະສາຂາ ທຫລ.ຫຼບ ໃນຄັ້ງນີ້ຕື່ມວ່າ ໃຫ້ມີການໃຫ້ຄະແນນຜົນການປະເມີນຕໍ່ຄະນະສາຂາ ທຫລ.ຫຼບ ຕາມລະບຽບການທີ່ກຳນົດ, ອີງໃສ່ຜົນສຳເລັດໃນການປະຕິບັດວຽກງານ, ຫຼີກເວັ້ນການປະເມີນຜົນແບບລວມໆ-ມີລັກສະນະເຫັນອົກເຫັນໃຈກັນ (ນະໂຍບາຍສະເລ່ຍ) ເຊິ່ງບໍ່ເປັນການສົ່ງເສີມໃຫ້ພະນັກງານແຂ່ງຂັນກັນສ້າງຜົນງານ, ບໍ່ສາມາດເລືອກໄດ້ວຽກດີ-ຄົນເດັ່ນຢ່າງແທ້ຈິງ.




ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນທ່າມກາງບັນຍາກາດການປະກອບຄຳຄິດເຫັນຕໍ່ການປະເມີນຕີລາຄາຂອງຄະນະສາຂາ ທຫລ.ຫຼບ ຢ່າງຟົດຟື້ນ ແລະ ກົງໄປກົງມາ ໂດຍສະເພາະຕໍ່ກັບຂໍ້ຄົງຄ້າງໃນການປະຕິບັດວຽກງານໃນ 1 ປີ ຜ່ານມາ ເພື່ອເປົ້າໝາຍການປັບປຸງວຽກງານໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ ເຮັດໃຫ້ກອງປະຊຸມໄດ້ສຳເລັດຕາມຄາດໝາຍທີ່ວາງໄວ້.

**#ພາບໂດຍ: ທ່ານ ບຸນມີ ຈັນທະວົງ**

**#ຂ່າວໂດຍ: ນ. ປາໃນ ພົນທະລາ**

## ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນກີບລາວ